ຮຽນຂໍໄຂຂ່າວຂໍ້          ພໍຮູ້ຮ່ອມຍາມເຫັນກັນ
ການວາຈາເປັນສັມພັນ          ແຕ່ຕ່າງກັນຄາຣົມລື້ນ
ປາກມີສິລທັມໄວ້          ປະຈຳໃຈນັ້ນຟັງຄ່ອງ
ທຳນອງຄຳວາດເວົ້າ          ຊຶມເຂົ້າຢູ່ໃຈ  ແທ້ເດີ

ບໍ່ຈຳເປັນຕ້ອງໃຊ້          ໃຫ້ສຽງສົ່ງດົງດັງ
ຈິດໃຈຟັງຄວາມຈິງ          ບໍ່ເຊືອງຊິງຄວາມຮ້າຍ
ການວາຈານັ້ນແທນໃຫ້          ອັນໃດດີເອົາມາຝາກ
ຄຳປາກຕົງທ່ຽງໝັ້ນ          ກັບໃຈນັ້ນ ເພິ່ນວ່າດີ

ກຽດສັກສີຈຶ່ງເພີ້ມ          ເຕີມຕື່ມຄຸນນະທັມ
ນຳເອົາຄວາມດີງາມ          ຊີໄຕ່ຕາມ ມາໃຫ້ເຈົ້າ
ຮາສີໃສບໍ່ມີເສົ້າ          ເອົາສັຈຈະວາຈາກ່ອນ
ສະອອນຄຳກ່າວຕ້ານ          ຖ້າຂານຂໍ້ບໍ່ອົ່ງ ໂຕ

ຢ່າໄດ້ປາກປ່າວ ໂມ້          ໂອທ່າວ່າເຮົາສູງ
ເຫັນເພື່ອນຝູງບໍ່ເຄີຍເກງ          ວ່າເກັ່ງກາຍເກີນພົ້ນ
ຄົນຊີເມີນໜີໜ້າ          ວາຈາແຂງເພິ່ນປັດເຂັ່ຽ  ເຈົ້າໃດ
ເສັຽຍ້ອນປາຍປາກລື້ນ          ຢາກປີນປ້ຳໃຫ້ໝູ່ລົງ  ບໍ່ດີເດີ

ສຽງປະກາດ ໂປ້ງປ້າງ          ກະດ້າງທ່າວາຈາແຂງ
ໃຫ້ສຽງແຮງເພື່ອຫວັງຜົລ          ໃຫ້ທຸກຄົນນັບຖືເຈົ້າ
ຢ່າສູ່ເອົາມາໃຊ້          ຄົນທັງຫຼາຍຊິແໜງໜ່າຍ
ຄຳເວົ້າອອກຈາກໃຈ   ເປັນພຽງຄຳສັ້ນໆ          ຝູງຄົນນັ້ນຈຶ່ງເຊື່ອເຮົາ

ຄຳເວົ້າຈົ່ງອ່ອນນ້ອມ          ຖນອມຄ່າຈິດໃຈ

ຄະນິງໃນຄາຣະວະ ບາດກ່າວຈາຄວນຮູ້
ຈິ່ງເຊີດຊູສນອງໄວ້ ຜູ້ໃດສູງຜູ້ໃດຕ່ຳ
ສຳຄັນຄຳປາກເວົ້າ ສົມນາມເຈົ້າເຜົ່າຜູ້ດີ ລາວເອີຍ!

ໂດຍ: ສີພັນດອນ ດອກບົວກາງວັນ